# "ເລື່ອງການເຕີບໃຫຍ່" ຂອງຜູ້ແທນສະພາປະຊາຊົນທີ່ເກີດຫຼັງປີ 1990

ໃນລະຫວ່າງວັນທີ 23 -28 ມັງກອນນີ້, ແຂວງຢູນນານໄດ້ດຳເນີນ "ກອງປະຊຸມສອງສະພາ" (ກອງປະຊຸມສອງສະພາແມ່ນຊື່ຫຍໍ້ຂອງສະພາປະຊາຊົນແຫ່ງຊາດຈີນ ແລະ ສະພາປຶກສາການເມືອງປະຊາຊົນຈີນ). ກອງປະຊຸມສອງສະພາແຂວງຢູນນານປີນີ້, ແມ່ນກອງປະຊຸມ ຄັ້ງທີ 2 ຂອງສະພາປະຊາຊົນ ແຂວງຢູນນານ ສະໄໝທີ 14 ແລະ ກອງປະຊຸມຄັ້ງທີ 2 ສະໄໝທີ 13 ຂອງສະພາປຶກສາການເມືອງປະຊາຊົນແຂວງຢູນນານ.

ກອງປະຊຸມສອງສະພາ ເປັນເຫດການສຳຄັນໃນຊີວິດການເມືອງ ຂອງປະຊາຊົນບັນດາເຜົ່າໃນແຂວງຢູນນານ. ສຳລັບກອງປະຊຸມສອງສະພາແຂວງຢູນນານປີນີ້, ມີຜູ້ແທນສະພາປະຊາຊົນຊຸດໜຶ່ງທີ່ເກີດຫຼັງປີ 1990 ຫຼື ຫຼັງປີ 1995 ໄດ້ດຶງດູດຄວາມສົນໃຈຈາກຄົນທັງຫຼາຍເປັນຢ່າງຍິ່ງ, ມື້ນີ້, ພວກເຮົາມາ ຮັບຟັງເລື່ອງການເຕີບໃຫຍຂອງຜູ້ແທນສະພາປະຊາຊົນທີ່ເກີດຫຼັງປີ 1990 ນຳກັນ.

## ນາງ ທັງຈື້ເຫວີນ ຜູ້ແທນສະພາປະຊາຊົນແຂວງຢູນນານ: ເຮັດໃຫ້ປະຊາຊົນຊົມໃຊ້ການບໍລິການສາທາລະນະສຸກ ທີ່ຍຸຕິທຳ ແລະ ເຂົ້າເຖິງໄດ້ຫຼາຍກວ່າເກົ່າ



ນັບແຕ່ການດຳລົງຕຳແໜ່ງເປັນເວລາໜຶ່ງປີມານີ້, ນາງ ທັງຈື້ເຫວີນ ທີ່ເປັນຜູ້ແທນສະພາປະຊາຊົນເກີດຫຼັງປີ 1990 ທີ່ມາຈາກລະບົບສາທາລະນະສຸກຂອງເຂດເມືອງເກົ່ານະຄອນລີ້ຈຽງແຂວງຢູນນານ ໄດ້ພະຍາຍາມຢ່າງໃຫຍ່ຫຼວງ ໃນດ້ານການຮ່ຳຮຽນ, ການທັດສະນະສຶກສາ ແລະ ການຄົ້ນຄວ້າ, ນາງ ກໍໄດ້ກຽມພ້ອມໃນການປະກອບຄຳສະເໜີທີ່ດີຕໍ່ກອງປະຊຸມສອງສະພາແຂວງຢູນນານປີນີ້.

"ຕົວຢ່າງ, ຂ້າພະເຈົ້າສັງເກດເຫັນວ່າ ແຂວງຢູນນານຕັ້ງຢູ່ໃນເຂດພູດອຍທີ່ສູງຈາກໜ້ານ້ຳທະເລ ຊຶ່ງເກີດມີ ພະຍາດຊຳເຮື້ອຫຼາຍຊະນິດເຊັ່ນ: ຄວາມດັນເລືອດສູງ ເປັນຕົ້ນ ໄດ້ເກີດຂຶ້ນເປັນຈຳນວນຫຼວງຫຼາຍ, ແຕ່ຄົນເຈັບທີ່ເປັນພະຍາດຊຳເຮື້ອຂອງແຂວງຢູນນານຫຼາຍຄົນ ແມ່ນມີຄວາມແຕກຕ່າງກັບຄົນເຈັບແຂວງອື່ນໆໃນລັກສະນະການຍອມກິນຢາ (ການກິນຢາຕາມການແນະນຳຂອງແພດໝໍ ຫຼື ການກິນຢາຕາມແຜນ) ຍ້ອນໄດ້ພິຈາລະນາເຖິງເງື່ອນໄຂທາງເສດຖະກິດ ຫຼື ດ້ານອື່ນໆ." ນາງ ທັງຈື້ເຫວີນ ກ່າວວ່າ:" ພວກເຮົາຫວັງວ່າ ຈະປະຕິບັດມາດຕະການແຈກຢາໃຫ້ຄົນເຈັບຫຼາຍກວ່າເກົ່າ ໂດຍບໍ່ເກັບຄ່າ ໃຫ້ແກ່ຄົນເຈັບທີ່ເປັນພະຍາດຊຳເຮື້ອຕ່າງໆເຊັ່ນ: ພະຍາດເບົາຫວານ ແລະ ພະຍາດຄວາມດັນເລືອດສູງ."

ໃນອະນາຄົດ, ນາງ ທັງຈື້ເຫວີນ ຫວັງວ່າ ຈະສາມາດປະກອບສ່ວນກຳລັງວັງຊາຂອງຕົນໃນຄວາມເປັນໄວໜຸ່ມ ເຂົ້າໃນການກໍ່ສ້າງຢູນນານທີ່ມີສຸຂະພາບແຂງແຮງ, ເພື່ອໃຫ້ປະຊາຊົນສາມາດຊົມໃຊ້ການບໍລິການດ້ານສາທາລະນະສຸກທີ່ຍຸຕິທຳ ແລະ ເຂົ້າເຖິງໄດ້ນັບມື້ຫຼາຍຂຶ້ນ. "ພ້ອມດຽວກັນນັ້ນ, ຂ້າພະເຈົ້າຍັງຫວັງວ່າ ຈະມີໂອກາດປະກອບຄວາມເຫັນໃຫ້ຫຼາຍກວ່າເກົ່າ ເພື່ອກຸ່ມຄົນຕ່າງໆ."

## ທ່ານ ຫຼີຊິນຫຼິນ ຜູ້ແທນສະພາປະຊາຊົນແຂວງຢູນນານ: ເລັ່ງການກໍ່ສ້າງຊົນນະບົດທີ່ກົມກຽວ ແລະ ສວຍງາມ



ທ່ານ ຫຼີຊິນຫຼິນ, ເກີດ ປີ 1995, ເປັນຮອງຫົວໜ້າ ໜ່ວຍການຜະລິດໂລຫະປະສົມຂອງພະແນກພາລະກິດໂລຫະປະສົມ ບໍລິສັດອາລູມິນຽມ ຢີຊິນ ເມືອງເຣີ້ຊຶ່ງ ກົງແຂວງປົກຄອງຕົນເອງເຜົ່າປາຍຕ້າຫຼີແຂວງຢູນນານ, ຕົ້ນຕໍຮັບຜິດຊອບການຄວບຄຸມຄຸນນະພາບຂອງເຕັກນິກຫຼໍ່ຫຼອມໂລຫະປະສົມອາລູມິນຽມ, ການສ້າງທີມງານມາດຕະຖານ ແລະ ວຽກງານອື່ນໆທີ່ກ່ຽວຂ້ອງ, ຍັງໄດ້ເຂົ້າຮ່ວມການປັບປຸງລະບຽບການດ້ານເຕັກນິກ, ການຄຸ້ມຄອງອຸປະກອນ, ການດັດສ້າງ ແລະ ອື່ນໆ, ໄດ້ເຮັດວຽກຢູ່ແຖວໜ້າຂອງການຜະລິດມາໂດຍຕະຫຼອດ.

ໃນໜຶ່ງປີທີ່ຜ່ານມາ, ທ່ານ ຫຼີຊິນຫຼິນ ໄດ້ເກັບກຳຄຳເຫັນຂອງປະຊາຊົນ ໂດຍຜ່ານການສຳຫຼວດຄົ້ນຄວ້າເທື່ອແລ້ວເທື່ອອີກ, ໄດ້ເດີນທາງໄປເຖິງແຫ່ງຕ່າງໆໃນຕົວເມືອງ ແລະ ຊົນນະບົດ. ໃນໄລຍະການສຳຫຼວດຄົ້ນຄວ້າ, ທ່ານ ໄດ້ໄປຢ້ຽມຢາມຜົນງານຫຼາຍຢ່າງ ໃນການກໍ່ສ້າງຊົນນະບົດທີ່ສວຍງາມ ແລະ ໄດ້ຖອດຖອນບົດຮຽນຫຼາຍຢ່າງ. ນອກນີ້, ທ່ານ ຍັງໄດ້ພົບເຫັນວ່າ: ເມືອງເຣີ້ຊຶ່ງ ທີ່ຕັ້ງຢູ່ທິດຕາເວັນຕົກສຽງເໜືອຂອງແຂວງຢູນນານ ຍັງມີຫຼາຍບັນຫາທີ່ຍັງແກ້ໄຂບໍ່ຕົກເຊັ່ນ: ສະພາບແວດລ້ອມໃນບ້ານບໍ່ສະອາດ, ບໍ່ມີຄວາມເປັນລະບຽບຮຽບຮ້ອຍ ແລະ ພັດທະນາບໍ່ໄດ້ດີປານໃດ ເນື່ອງຈາກວ່າພື້ນຖານໂຄງລ່າງຂອງຊົນນະບົດທ້ອງຖິ່ນຍັງອ່ອນແອຫຼາຍ.

ຕໍ່ເລື່ອງນີ້, ໃນກອງປະຊຸມສອງສະພາແຂວງຢູນນານປີນີ້, ທ່ານ ຫຼີຊິນຫຼິນ ໄດ້ສຸມໃສ່ບັນຫາການປັບປຸງສະພາບແວດລ້ອມການດຳລົງຊີວິດຢູ່ຊົນນະບົດໃຫ້ດີຂຶ້ນ. ທ່ານ ຫຼີຊິນຫຼິນສະເໜີໃຫ້ເມືອງເຣີ້ຊຶ່ງ ຊຸກຍູ້ວຽກງານຈຸດທົດລອງເພື່ອປັບປຸງສະພາບແວດລ້ອມການດຳລົງຊີວິດຢູ່ຊົນນະບົດໃຫ້ດີຂຶ້ນ, ເລັ່ງລັດປັບປຸງສະພາບແວດລ້ອມດຳລົງຊີວິດຢູ່ຊົນນະບົດ, ຍົກລະດັບການປັບປຸງສະພາບແວດລ້ອມການດຳລົງຊີວິດຢູ່ຊົນນະບົດທົ່ວເມືອງໃຫ້ສູງຂຶ້ນ, ສົ່ງເສີມການພັດທະນາແບບເຊື່ອມໂຍງເຂົ້າກັນ ລະຫວ່າງ ຕົວເມືອງ ແລະ ຊົນນະບົດ, ເລັ່ງລັດການກໍ່ສ້າງຊົນນະບົດທີ່ມີສະພາບແວດລ້ອມການດຳລົງຊີວິດທີ່ດີ, ມີສະພາບແວດລ້ອມປະກອບອາຊີບທີ່ດີ, ກົມກຽວກັນ ແລະ ສວຍງາມ.

## ນາງ ຫຼີເຈິ້ງຈີ ຜູ້ແທນສະພາປະຊາຊົນແຂວງຢູນນານ: ຫວັງວ່າສາມາດເຮັດແທ້ທຳຈິງຫຼາຍກວ່າເກົ່າ ເພື່ອປະຊາຊົນ



ມີສາຍຕາທີ່ສົດໃສ ແລະ ມີຮອຍຍິ້ມທີ່ໜ້າຮັກ, ນາງ ຫຼີເຈິ້ງຈີ ເວົ້າດ້ວຍຄວາມໝັ້ນໃຈ.

ນາງ ຫຼີເຈິ້ງຈີ, ເກີດ ປີ 1990, ເປັນຫົວໜ້າໜ່ວຍຕຸລາການ ຕາແສງແຢວເຈີ ຫ້ອງການຕຸລາການ ເມືອງຊີວເປີຍກົງແຂວງປົກຄອງຕົນເອງເຜົ່າຈ້ວງ-ເຜົ່າມົ້ງເຫວີນຊານ ແຂວງຢູນນານ. ພາຍຫຼັງໄດ້ຮັບເລືອກຕັ້ງເປັນຜູ້ແທນສະພາປະຊາຊົນເປັນເວລາ 1 ປີມານີ້, ນາງ ໄດ້ໃຊ້ໂອກາດໄກ່ເກ່ຍຂໍ້ຂັດແຍ່ງໃນການເຮັດວຽກ ແລະ ການຢ້ຽມຢາມບັນດາຄອບຄົວ ເພື່ອລົງເລິກ ຊອກຮູ້ຄວາມຕ້ອງການ ແລະ ຄວາມຫຍຸ້ງຍາກຂອງປະຊາຊົນ. ໃນເວລາຫວ່າງ, ນາງ ຍັງສືບຕໍ່ສຶກສາກົດໝາຍ ແລະ ກົດລະບຽບທີ່ກ່ຽວຂ້ອງກັບການປະຕິບັດໜ້າທີ່ຂອງຜູ້ແທນປະຊາຊົນ ເພື່ອສ້າງພື້ນຖານຄວາມຮູ້ຂອງຕົນໃຫ້ອຸດົມສົມບູນ. ນາງ ຍັງຈະໃຊ້ໂອກາດການທັດສະນະສຶກສາ ແລະ ການຄົ້ນຄວ້າຮ່ວມກັນ ເພື່ອຖອດຖອນບົດຮຽນນຳຜູ້ແທນປະຊາຊົນທີ່ມີປະສົບການ.

ນາງ ຫຼີເຈິ້ງຈີ ທີ່ເຮັດວຽກຢູ່ຂັ້ນຮາກຖານເປັນເວລາຫຼາຍປີ, ນາງ ໄດ້ສະເໜີໃຫ້ສ້າງຄວາມເຂັ້ມແຂງ ແລະ ໝັ້ນຄົງໃຫ້ແກ່ກຳລັງຕຸລາການຂັ້ນຮາກຖານ. ພ້ອມດຽວກັນນັ້ນ, ລາວຍັງໄດ້ປຸກລະດົມຄວາມຫ້າວຫັນຂອງຜູ້ໄກ່ເກ່ຍປະຊາຊົນ ແລະ ສົ່ງເສີມບົດບາດຂອງການໄກ່ເກ່ຍປະຊາຊົນຢ່າງເຕັມທີ່.

ນາງ ຫຼີເຈິ້ງຈີ ກ່າວວ່າ: ໃນຖານະເປັນຜູ້ແທນສະພາປະຊາຊົນທີ່ເກີດຫຼັງປີ 1990, ຂ້າພະເຈົ້າ ຈະເກັບກຳຄວາມເຫັນຂອງປະຊາຊົນໃຫ້ຫຼາຍກວ່າເກົ່າ ໂດຍຕິດຕໍ່ພົວພັນກັບ ວຽກງານຂອງຕົນ, ຫວັງວ່າ ສາມາດສະເໜີຂໍ້ສະເໜີທີ່ມີຄຸນນະພາບສູງຫຼາຍກວ່າເກົ່າ ໃນການປະຕິບັດໜ້າທີ່ຂອງຕົນໃນຕໍ່ໄປ ແລະ ເຮັດແທ້ທຳຈິງຫຼາຍກວ່າເກົ່າ ເພື່ອປະຊາຊົນ.

ເວັບໄຊຢູນນານ, ຖະແຫຼງຂ່າວຢູນນານ, ຮູບພາບໂດຍຜູ້ຮັບສຳພາດ, ເວັບໄຊຢູນນານ

ynzhanba@163.com
laos.yunnangateway.com

## ຄາດໝາຍຕົ້ນຕໍຂອງການພັດທະນາເສດຖະກິດສັງຄົມ ແຂວງຢູນນານ ປີ 2024

ໃນກອງປະຊຸມ ຄັ້ງທີ 2 ຂອງສະພາປະຊາຊົນແຂວງຢູນນານ ສະໄໝທີ 14, ບົດລາຍງານວຽກງານຂອງອຳນາດການປົກຄອງແຂວງຢູນນານ ໄດ້ຊີ້ອອກວ່າ, ໃຫ້ສະເໜີຄາດໝາຍຕົ້ນຕໍຂອງການພັດທະນາເສດຖະກິດສັງຄົມ ແຂວງຢູນນານປີ 2024 ດັ່ງນີ້:



- ຍອດມູນຄ່າການຜະລິດທົ່ວແຂວງ ເພີ່ມຂຶ້ນປະມານ 5%
- ມູນຄ່າເພີ່ມຂອງອຸດສາຫະກຳຂະໜາດໃຫຍ່ ເພີ່ມຂຶ້ນປະມານ 7%
- ການລົງທຶນດ້ານອຸດສາຫະກຳເພີ່ມຂຶ້ນຫຼາຍກ່ວາ 10%



- ຍອດມູນຄ່າຂາຍຍ່ອຍເຄື່ອງອຸປະໂພກ-ບໍລິໂພກ ເພີ່ມຂຶ້ນປະມານ 7%
- ຍອດມູນຄ່າການຄ້າ ຂາເຂົ້າ-ຂາອອກ ເພີ່ມຂຶ້ນປະມານ 30%



- ງົບປະມານລາຍຮັບສາທາລະນະສາມັນທົ່ວແຂວງ ເພີ່ມຂຶ້ນ 3%
- ຈັງຫວະການເຕີບໂຕຂອງລາຍຮັບ ທີ່ສາມາດຈັບຕ້ອງໄດ້ ສະເລ່ຍຕໍ່ຫົວຄົນຂອງປະຊາຊົນ ແມ່ນສອດຄ່ອງກັບຈັງຫວະການເຕີບໂຕຂອງເສດຖະກິດ
- ຜົນຜະລິດທັນຍາຫານຮັບປະກັນໃຫ້ຫຼາຍກວ່າ 19,395 ລ້ານໂຕນ

ບັນຊີວີແຊັດຂອງ "ຖະແຫຼງຂ່າວຢູນນານ"
ຮູບພາບໂດຍ ໜັງສືພິມຢູນນານ